Building a better
working world

Ernst & Young Lao Limited.
6th Floor, Capital Tower
23 Singha Road, Nongbone Village
Saysettha District Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61042000/18917948

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ຄະນະບໍລິຫານ ຂອງທະນາຄານ ເມແບັງ ສາຂາລາວ ທີ່ນັບຖື**

### *ຄໍາເຫັນ*

ພວກຂ້າພະເຈົ້າ ໄດ້ດໍາເນີນການກວດສອບ ເອກະສານລາຍງານການເງິນຂອງທະນາຄານ ເມແບັງ ສາຂາລາວ (ຕໍ່ໄປນີ້ເອີ້ນ ວ່າ "ສາຂາ"), ເຊິ່ງປະກອບດ້ວຍໃບສະຫຼຸບຊັບສິນບັດນະວັນທີ 31 ທັນວາ 2016, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສໍາລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍທາງບັນຊີທີ່ສໍາຄັນ.

ໃນຄໍາເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງສາຂາໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນໍາສະເໜີເອກະສານລາຍງານການເງິນ.

### *ພື້ນຖານການອອກຄໍາເຫັນ*

ພວກຂ້າພະເຈົ້າໄດ້ດໍາເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ. ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກໍານົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມ ໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ"* ຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາ ໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສໍາລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກໍານົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ("ຂໍ້ກໍານົດທາງດ້ານຈັນຍາບັນຂອງລາວ") ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສໍາລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ຂໍ້ກໍານົດທາງດ້ານຈັນຍາບັນຂອງລາວ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ.

### *ບັນຫາທີ່ຄວນເອົາໃຈໃສ່*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍຊ້ອນທ້າຍ ເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນໍາໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນໍາສະເໜີຖານະທາງການເງິນ, ຜົນການດໍາເນີນງານ ແລະ ກະແສເງິນສົດຂອງສາຂາ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ຄໍາເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄໍາເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

### *ບັນຫາອື່ນໆ*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເລກທີ 2.2 ກ່ຽວກັບພື້ນຖານໃນການກະກຽມເອກະສານລາຍງານການເງິນ, ເຊິ່ງອະທິບາຍເຖິງວັດຖຸປະສົງໃນການການນໍາສະເໜີໂຕເລກອ້າງອີງເປັນສະກຸນເງິນໂດລາສະຫາລັດ ທີ່ນອກເໜືອຈາກສະກຸນເງິນກີບ. ຈໍານວນທຽບເທົ່າໂດລາສະຫາລັດໄດ້ຖືກສະແດງໃນເອກະສານລາຍງານການເງິນ ເພື່ອວັດຖຸປະສົງໃນການນໍາໃຊ້ພາຍໃນສາຂາເທົ່ານັ້ນ ແລະ ບໍ່ຄວນຖືກນໍາມາໃຊ້ເພື່ອວັດຖຸປະສົງອື່ນ.

Building a better
working world

*ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານສາຂາແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ກົດໝາຍວ່າດ້ວຍການການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ວາງອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫລວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫລື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາ ທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານສາຂາ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

*ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ. ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບື່ອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

EY

Building a better working world

- ສ້າງທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີກ່ຽວວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນ ຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງສາຂາໃນສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

Ernst & Young Lao Ltd

ກະຊວງ ການ ເງິນ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ ERNST & YOUNG LAO CO.,LTD ນະຄອນ ຫລວງ ວຽງຈັນ

ນະຄອນຫຼວງວຽງຈັນ, ສປປ ລາວ

9 ມີນາ 2017

## ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຜົນໄດ້ຮັບ

ສຳລັບປີ ທີ່ສິ້ນສຸດ ວັນທີ 31 ທັນວາ 2016

| *ລຳດັບ* | *ລາຍການ* | *ບົດ ອະທິບາຍ* | *2016 ພັນກີບ* | *2015 ພັນກີບ* | *2016 ທຽບເທົ່າ ໂດລາ* | *2015 ທຽບເທົ່າ ໂດລາ* |
|---|---|---|---|---|---|---|
| **A.** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | | | |
| 1. | **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | 3 | **112,244,890** | **108,657,823** | **13,726,904** | **13,343,709** |
| 1.1 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ ລະຫວ່າງທະນາຄານ | | 92,538,598 | 91,978,074 | 11,316,938 | 11,295,355 |
| 1.2 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ ຈາກເງິນໃຫ້ກູ້ຢືມແກ່ລູກຄ້າ | | 19,706,292 | 16,679,749 | 2,409,966 | 2,048,354 |
| 2. | **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ** | 3 | **(62,582,143)** | **(61,712,746)** | **(7,653,436)** | **(7,578,625)** |
| 2.1 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ ລະຫວ່າງທະນາຄານ | | (57,282,400) | (57,940,507) | (7,005,308) | (7,115,376) |
| 2.2 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ ໃຫ້ລູກຄ້າ | | (5,299,743) | (3,772,239) | (648,128) | (463,249) |
| I. | **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | | **49,662,747** | **46,945,077** | **6,073,468** | **5,765,084** |
| 3 | **ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການ** | 4 | **2,619,767** | **2,210,565** | **320,382** | **271,468** |
| 4 | **ລາຍຈ່າຍຈາກຄ່າທຳນຽມ ແລະ ຄ່ານາຍໜ້າ** | 4 | **(254,954)** | **(78,953)** | **(31,179)** | **(9,696)** |
| 5 | **ຂາດທຶນ/ກຳໄລສຸດທິ ຈາກການຊື້ຂາຍເງິນຕາຕ່າງປະເທດ** | 5 | **(102,932)** | **340,863** | **(12,588)** | **41,860** |
| II. | **ລາຍຮັບສຸດທິ ຈາກການດຳເນີນງານ** | | **51,924,628** | **49,417,552** | **6,350,083** | **6,068,716** |

## ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຜົນໄດ້ຮັບ (ຕໍ່)
ສຳລັບປີ ທີ່ສິ້ນສຸດ ວັນທີ 31 ທັນວາ 2016

| ລຳດັບ | ລາຍການ | ບົດ ອະທິບາຍ | 2016 ພັນກີບ | 2015 ພັນກີບ | 2016 ທຽບເທົ່າ ໂດລາ | 2015 ທຽບເທົ່າ ໂດລາ |
|---|---|---|---|---|---|---|
| B | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | | | |
| 6 | **ລາຍຮັບອື່ນໆຈາກການດຳເນີນງານ** | 6 | **1,057,611** | **2,476,486** | **129,340** | **304,125** |
| 7 | **ລາຍຈ່າຍບໍລິຫານ** | | **(10,019,139)** | **(9,383,563)** | **(1,225,283)** | **(1,152,347)** |
| 7.1 | ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆທີ່ກ່ຽວຂ້ອງກັບພະນັກງານ | 7 | (6,391,619) | (5,763,683) | (781,658) | (707,808) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 8 | (3,627,520) | (3,619,880) | (443,625) | (444,539) |
| 8 | **ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ** | | **(1,262,320)** | **(1,497,133)** | **(154,374)** | **(183,853)** |
| 9 | **ລາຍຈ່າຍອື່ນໆໃນການດຳເນີນງານ** | 9 | **(779,010)** | **(2,324,001)** | **(95,268)** | **(285,399)** |
| 10 | ເງິນແຮສຸດທິສຳລັບເງິນກູ້ບໍ່ເກີດດອກອອກຜົນ | **13.2** | **11,348,678** | **(24,774,646)** | **1,387,878** | **(3,042,447)** |
| 10.1 | ເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ | | (14,993,490) | (35,902,437) | (1,833,617) | (4,408,994) |
| 10.2 | ເກັບຄືນເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ | | 26,342,168 | 11,127,791 | 3,221,495 | 1,366,547 |
| III. | **ກຳໄລທັງໝົດກ່ອນຫັກອາກອນ** | | **52,270,448** | **13,914,695** | **6,392,376** | **1,708,795** |
| 11 | **ອາກອນກຳໄລປະຈຸບັນ** | **18** | **(12,544,907)** | **(3,364,706)** | **(1,534,170)** | **(413,202)** |
| IV | **ກຳໄລຫຼັງຫັກອາກອນ** | | **39,725,541** | **10,549,989** | **4,858,206** | **1,295,593** |

ກະກຽມໂດຍ:

ທ່ານ Felix Desmond Francis
ຫົວໜ້າພະແນກປະຕິບັດງານ

ອະນຸມັດໂດຍ:

ທ່ານ Lim Wai Hoong
ຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

9 ມີນາ 2017

# ທະນາຄານ ເມແບັງ ສາຂາລາວ

ໃບສະຫຼຸບຊັບສິນບັດ

ນະວັນທີ 31 ທັນວາ 2016

| ລຳ ດັບ | ຊັບສິນ | ບົດ ອະທິບາຍ | 31 ທັນວາ 2016 ພັນກີບ | 31 ທັນວາ 2015 ພັນກີບ | 31 ທັນວາ 2016 ທຽບເທົ່າໂດລາ | 31 ທັນວາ 2015 ທຽບເທົ່າໂດລາ |
|---|---|---|---|---|---|---|
| I | **ເງິນສົດ ແລະ ເງິນຝາກ ຢູ່ທະນາຄານ ແຫ່ງ ສປປ ລາວ** | | **2,001,548,233** | **1,979,530,770** | **244,777,820** | **243,096,006** |
| 1 | ເງິນສົດໃນກຳມື | 10 | 3,807,177 | 3,681,768 | 465,596 | 452,140 |
| 2 | ເງິນຝາກກະແສລາຍວັນ | 11 | 117,031,056 | 102,959,002 | 14,312,224 | 12,643,866 |
| 3 | ເງິນຝາກມີກຳນົດ | 11 | 1,880,710,000 | 1,872,890,000 | 230,000,000 | 230,000,000 |
| II | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **177,853,652** | **109,250,615** | **21,750,477** | **13,416,507** |
| 1 | ເງິນຝາກກະແສລາຍວັນ | 12.1 | 114,564,652 | 70,308,615 | 14,010,597 | 8,634,240 |
| 2 | ເງິນຝາກມີກຳນົດ | 12.2 | 63,289,000 | 38,942,000 | 7,739,880 | 4,782,267 |
| III | **ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫັກເງິນແຮສຸດທິສຳລັບເງິນກູ້ບໍ່ເກີດ ດອກອອກຜົນ** | **13** | **171,422,139** | **194,315,122** | **20,963,940** | **23,862,842** |
| IV | **ຊັບສິນບັດຄົງທີ່** | | **4,941,294** | **5,964,487** | **604,292** | **732,467** |
| 1 | ຊັບສິນບັດຄົງທີ່ມີຕົວຕົນ | 14.1 | 4,751,694 | 5,878,371 | 581,105 | 721,893 |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 14.2 | 24,354 | 21,763 | 2,978 | 2,673 |
| 3 | ຊັບສິນບັດຄົງທີ່ກຳລັງເຄື່ອນຍ້າຍ | 14.3 | 165,246 | 64,353 | 20,209 | 7,901 |
| V | **ຊັບສິນອື່ນໆ** | | **32,555,772** | **42,880,956** | **3,981,384** | **5,265,988** |
| 1 | ດອກເບ້ຍຄ້າງຮັບ | | 30,798,990 | 30,238,849 | 3,766,539 | 3,713,476 |
| 2 | ຊັບສິນອື່ນໆ | 15 | 1,756,782 | 12,642,107 | 214,845 | 1,552,512 |
| | **ລວມຊັບສິນ** | | **2,388,321,090** | **2,331,941,950** | **292,077,913** | **286,373,810** |

## ທະນາຄານ ເມແບັງ ສາຂາລາວ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2016

| ລຳ ດັບ | ໜີ້ສິນ ແລະ ທຶນ | ບົດ ອະທິບາຍ | 31 ທັນວາ 2016 ພັນກີບ | 31 ທັນວາ 2015 ພັນກີບ | 31 ທັນວາ 2016 ທຽບເທົ່າໂດລາ | 31 ທັນວາ 2015 ທຽບເທົ່າໂດລາ |
|---|---|---|---|---|---|---|
| I | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | | **1,987,987,201** | **2,044,535,156** | **243,119,384** | **251,078,858** |
| 1 | ເງິນຝາກກະແສລາຍວັນ | 16.1 | 60,609,201 | 52,159,656 | 7,412,156 | 6,405,458 |
| 2 | ເງິນຝາກມີກຳນົດ | 16.2 | 1,927,378,000 | 1,992,375,500 | 235,707,228 | 244,673,400 |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **17** | **219,036,243** | **143,074,379** | **26,786,871** | **17,570,230** |
| 1 | ເງິນຝາກກະແສລາຍວັນ | | 78,222,010 | 35,810,453 | 9,566,101 | 4,397,698 |
| 2 | ເງິນຝາກປະຢັດ | | 29,058,366 | 20,696,428 | 3,553,671 | 2,541,622 |
| 3 | ເງິນຝາກມີກຳນົດ | | 103,853,032 | 86,567,498 | 12,700,628 | 10,630,910 |
| 4 | ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | 7,902,835 | - | 966,471 | - |
| III | **ໜີ້ສິນອື່ນໆ** | | **23,373,687** | **25,997,997** | **2,858,467** | **3,192,682** |
| 1 | ດອກເບ້ຍຄ້າງຈ່າຍ | | 19,409,601 | 19,635,275 | 2,373,682 | 2,411,309 |
| 2 | ອາກອນຄ້າງຈ່າຍ | 18 | 2,883,896 | 825,068 | 352,684 | 101,322 |
| 3 | ໜີ້ຕ້ອງຈ່າຍອື່ນໆ | 19 | 1,080,190 | 5,537,654 | 132,101 | 680,051 |
| | **ລວມຍອດໜີ້ສິນ** | | **2,230,397,131** | **2,213,607,532** | **272,764,722** | **271,841,770** |
| IV | **ທຶນ ແລະ ຄັງສຳຮອງ** | | | | | |
| 1 | ທຶນຈົດທະບຽນຖອກແລ້ວ | 20 | 100,661,400 | 100,661,400 | 12,310,309 | 12,361,709 |
| 2 | ຄັງສະສົມຕາມລະບຽບການ | | 5,627,278 | 1,654,724 | 688,184 | 203,209 |
| 3 | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 13.2 | 1,035,566 | 1,125,776 | 126,644 | 138,251 |
| 4 | ກຳໄລສະສົມ | | 50,599,715 | 14,892,518 | 6,188,054 | 1,828,871 |
| | **ລວມຍອດທຶນ** | | **157,923,959** | **118,334,418** | **19,313,191** | **14,532,040** |
| | **ລວມໜີ້ສິນ ແລະ ທຶນ** | | **2,388,321,090** | **2,331,941,950** | **292,077,913** | **286,373,810** |

## ທະນາຄານ ເມແບັງ ສາຂາລາວ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2016

| ລຳດັບ | ລາຍການນອກໃບສະຫຼຸບຊັບສິນບັດ | ບົດ ອະທິບາຍ | 31 ທັນວາ 2016 ພັນກີບ | 31 ທັນວາ 2015 ພັນກີບ | 31 ທັນວາ 2016 ທຽບເທົ່າໂດລາ | 31 ທັນວາ 2015 ທຽບເທົ່າໂດລາ |
|---|---|---|---|---|---|---|
| I | **ຄຳໝັ້ນສັນຍາ** | | | | | |
| 1 | ຄຳໝັ້ນສັນຍາທາງການເງິນໃຫ້ກັບລູກຄ້າ | | 101,669,958 | 16,265,745 | 12,433,650 | 1,997,513 |
| | **ລວມຍອດຄຳໝັ້ນສັນຍາທີ່ໄດ້ໃຫ້** | | **101,669,958** | **16,265,745** | **12,433,650** | **1,997,513** |
| II | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ** | | | | | |
| A | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳສຳລັບເງິນກູ້** | | **534,443,716** | **916,140,128** | **65,359,388** | **112,506,463** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການມັດຈຳສຳລັບເງິນກູ້ໃຫ້ແກ່ລູກຄ້າ | | 534,443,716 | 916,140,128 | 65,359,388 | 112,506,463 |
| B | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ ສຳລັບໜັງສືຄ້ຳປະກັນທີ່ອອກ** | | **101,710,628** | **153,375,845** | **12,438,624** | **18,807,658** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການມັດຈຳສຳລັບໜັງສືຄ້ຳປະກັນທີ່ອອກໃຫ້ແກ່ລູກຄ້າ | | 101,710,628 | 153,375,845 | 12,438,624 | 18,807,658 |
| | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ** | | **636,154,344** | **1,069,515,973** | **77,798,012** | **131,314,121** |

ກະກຽມໂດຍ:

ທ່ານ Felix Desmond Francis
ຫົວໜ້າພະແນກປະຕິບັດງານ

ອະນຸມັດໂດຍ:

ທະນາຄານ ມາເລຍັນ ເບີຮັດ (ມະຫາຊົນ ຈຳກັດ) ສາຂາ ລາວ
Malayan Banking Public Ltd Co.,Lao Branch

ທ່ານ Lim Wai Hoong
ຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

9 ມີນາ 2017

## ທະນາຄານ ເມແບັງ ສາຂາລາວ

ໃບລາຍງານການປ່ຽນແປງຂອງທຶນຕົນເອງ
ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

| *ລາຍການ* | *ທຶນຈົດທະບຽນ ຖອກແລ້ວ ພັນກີບ* | *ຄັງສະສົມຕາມ ລະບຽບການ ພັນກີບ* | *ເງິນແຮທົ່ວໄປສໍາລັບ ກິດຈະກໍາສິນເຊື່ອ ພັນກີບ* | *ກໍາໄລສະສົມ ພັນກີບ* | *ລວມ ພັນກີບ* |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 31 ທັນວາ 2015** | **100,661,400** | **1,654,724** | **1,125,776** | **14,892,518** | **118,334,418** |
| ກໍາໄລສຸດທິພາຍໃນປີ | - | - | - | 39,725,541 | 39,725,541 |
| ສ້າງຄັງສະສົມຕາມລະບຽບການພາຍໃນປີ | - | 3,972,554 | - | (3,972,554) | - |
| ລາຍຈ່າຍເງິນແຮທົ່ວໄປພາຍໃນປີ | - | - | 694,739 | - | 694,739 |
| ເກັບຄືນເງິນແຮທົ່ວໄປພາຍໃນປີ | - | - | (788,001) | - | (788,001) |
| ດັດແກ້ອາກອນກໍາໄລສໍາລັບປີ 2014 | - | - | - | (35,525) | (35,525) |
| ດັດແກ້ອາກອນມູນຄ່າເພີ່ມສໍາລັບປີ 2014 | - | - | - | (10,265) | (10,265) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 3,052 | - | 3,052 |
| **ຍອດເຫຼືອນະວັນທີ 31 ທັນວາ 2016** | **100,661,400** | **5,627,278** | **1,035,566** | **50,599,715** | **157,923,959** |

**ທະນາຄານ ເມແບັງ ສາຂາລາວ**

ໃບລາຍງານການປ່ຽນແປງຂອງທຶນຕົນເອງ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

| *ລາຍການ* | *ທຶນຈົດທະບຽນຖອກແລ້ວ ທຽບເທົ່າ ໂດລາ* | *ຄັງສະສົມຕາມລະບຽບການ ທຽບເທົ່າ ໂດລາ* | *ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ ທຽບເທົ່າ ໂດລາ* | *ກຳໄລສະສົມ ທຽບເທົ່າ ໂດລາ* | *ລວມ ທຽບເທົ່າ ໂດລາ* |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 31 ທັນວາ 2015** | **12,361,709** | **203,209** | **138,251** | **1,828,871** | **14,532,040** |
| ກຳໄລສຸດທິພາຍໃນປີ | - | - | - | 4,858,206 | 4,858,206 |
| ສ້າງຄັງສະສົມຕາມລະບຽບການພາຍໃນປີ | - | - | 84,963 | - | 84,963 |
| ລາຍຈ່າຍເງິນແຮທົ່ວໄປພາຍໃນປີ | - | - | (96,368) | - | (96,368) |
| ເກັບຄືນເງິນແຮທົ່ວໄປພາຍໃນປີ | - | 485,820 | - | (485,820) | - |
| ດັດແກ້ອາກອນກຳໄລສຳລັບປີ 2014 | - | - | - | (4,345) | (4,345) |
| ດັດແກ້ອາກອນມູນຄ່າເພີ່ມສຳລັບປີ 2014 | - | - | - | (1,255) | (1,255) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | (51,400) | (845) | (202) | (7,603) | (60,050) |
| **ຍອດເຫຼືອນະວັນທີ 31 ທັນວາ 2016** | **12,310,309** | **688,184** | **126,644** | **6,188,054** | **19,313,191** |

ກະກຽມໂດຍ:

ທ່ານ Felix Desmond Francis
ຫົວໜ້າພະແນກປະຕິບັດງານ

ອະນຸມັດໂດຍ:

ທ່ານ Lim Wai Hoong
ຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ
9 ມີນາ 2017

## ທະນາຄານ ເມແບັງ ສາຂາລາວ

ໃບລາຍງານກະແສເງິນສົດ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

| *ລາຍການ* | *ບົດ ອະທິບາຍ* | *2016 ພັນກີບ* | *2015 ພັນກີບ* | *2016 ທຽບເທົ່າ ໂດລາ* | *2015 ທຽບເທົ່າ ໂດລາ* |
|---|---|---|---|---|---|
| **ກຳໄລສຸດທິກ່ອນຫັກອາກອນ** | | **52,270,448** | **13,914,695** | **6,392,376** | **1,708,795** |
| *ດັດແກ້ສຳລັບ:* | | | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | 1,262,320 | 1,497,133 | 154,374 | 183,853 |
| ລາຍຈ່າຍເງິນແຮສຳລັບໜີ້ເສຍ | 13.2 | 15,688,229 | 38,162,885 | 1,918,580 | 4,686,588 |
| ເກັບຄືນ ເງິນແຮສຳລັບໜີ້ເສຍຂອງເງິນກູ້ຢືມ ໃຫ້ແກ່ລູກຄ້າ | 13.2 | (27,130,169) | (13,285,091) | (3,317,863) | (1,631,474) |
| **ກະແສເງິນສົດສຸດທິຈາກການດຳເນີນງານ ກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນ ໃນການດຳເນີນງານ** | | **42,090,828** | **40,289,622** | **5,147,467** | **4,947,762** |
| (ເພີ່ມຂຶ້ນ)/ຫຼຸດລົງຂອງ ຊັບສິນ ຈາກການ ດຳເນີນງານ | | | | | |
| ເງິນຝາກຢູ່ທະນາຄານອື່ນ | | (31,745,809) | (27,391,368) | (3,882,330) | (3,363,793) |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | 34,137,822 | (14,827,439) | 4,174,859 | (1,820,882) |
| ໜີ້ຄ້າງຮັບດອກເບ້ຍຄ້າງຮັບ | | (560,141) | (42,401) | (68,502) | (5,207) |
| ຊັບສິນອື່ນໆ | | 10,992,216 | (10,191,632) | 1,344,284 | (1,249,711) |
| ເພີ່ມຂຶ້ນ/(ຫຼຸດລົງ) ໜີ້ສິນ ຈາກການດຳເນີນ ງານ | | | | | |
| ເງິນຝາກ ແລະ ເງິນກູ້ຈາກທະນາຄານ ອື່ນ | | (56,547,955) | 33,235,622 | (6,915,489) | 4,081,496 |
| ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນ ໃຫ້ລູກຄ້າ | | 75,961,864 | 75,733,852 | 9,289,698 | 9,300,485 |
| ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | | (225,674) | 1,090,589 | (27,599) | 133,930 |
| ໜີ້ສິນອື່ນໆ | | (4,395,432) | 2,800,054 | (537,536) | 343,864 |
| ອາກອນກຳໄລຖອກແລ້ວພາຍໃນປີ | 18 | (10,593,508) | (4,566,732) | (1,295,876) | (562,690) |
| **ກະແສເງິນສົດສຸດທິ ຈາກ ກິດຈະກຳການ ດຳເນີນງານ** | | **59,114,211** | **96,130,167** | **7,228,976** | **11,805,254** |
| **ກິດຈະກຳການລົງທຶນ** | | | | | |
| ລາຍຈ່າຍຊື້ຊັບສົມບັດ ແລະ ອຸປະກອນ | | (239,520) | (26,826) | (29,292) | (3,294) |
| **ກະແສເງິນສົດສຸດທິຈາກກິດຈະກຳທາງດ້ານ ການລົງທຶນ** | | **(239,520)** | **(26,826)** | **(29,292)** | **(3,294)** |

# ທະນາຄານເມແບັງ ສາຂາລາວ

ໃບລາຍງານກະແສເງິນສົດ (ຕໍ່)
ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

| *ລາຍການ* | *ບົດ ອະທິບາຍ* | *2016 ພັນກີບ* | *2015 ພັນກີບ* | *2016 ທຽບເທົ່າ ໂດລາ* | *2015 ທຽບເທົ່າ ໂດລາ* |
|---|---|---|---|---|---|
| ກິດຈະກໍາທາງດ້ານການເງິນ | | | | | |
| ກະແສເງິນສົດສຸດທິຈາກກິດຈະກໍາທາງດ້ານການເງິນ | | - | - | - | - |
| ປ່ຽນແປງສຸດທິໃນເງິນສົດ ແລະ ທຽບເທົ່າເງິນສົດສຸດທິ | | **58,874,691** | **96,103,341** | **7,199,684** | **11,801,960** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ | | **152,724,485** | **56,621,144** | **18,755,310** | **7,009,303** |
| ຜົນດ່ຽງອັດຕາແລກປ່ຽນເງິນຕາຕ່າງປະເທດ | | - | - | (77,634) | (55,953) |
| ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ | **21** | **211,599,176** | **152,724,485** | **25,877,360** | **18,755,310** |

ກະກຽມໂດຍ:

ທ່ານ Felix Desmond Francis
ຫົວໜ້າພະແນກປະຕິບັດງານ

ອະນຸມັດໂດຍ:

ທ່ານ. Lim Wai Hoong
ຜູ້ອໍານວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

9 ມີນາ 2017